**ບົດຄວາມ**

**ສະພາບການເໜັງຕີງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ການປັບລາຄາຂາຍຍົກ-ຂາຍຍ່ອຍນ້ຳມັນເຊື້ອໄຟ ພາຍປະເທດ ຄັ້ງວັນທີ 24 ກຸມພາ 2022**

ເນື່ອງຈາກວ່າ ນ້ຳມັນເຊື້ອໄຟ ທີ່ຊົມໃຊ້ພາຍໃນປະເທດ ແມ່ນນຳເຂົ້າຈາກໄທ ແລະ ສສ ຫວຽດນາມ ເປັນຫຼັກ ແລະ ການກຳນົດລາຄານຳເຂົ້າ ແມ່ນໄດ້ກຳນົດຕາມການເໜັງຕີງຂຶ້ນ-ລົງຂອງຕະຫຼາດໂລກໃນແຕ່ລະໄລຍະ ເຊິ່ງພາຍໃນປະເທດ ແມ່ນມີການປັບລາຄານ້ຳມັນເຊື້ອໄຟທຸກ 15 ວັນ. ມາຮອດປະຈຸບັນ, ອີງຕາມການຕິດຕາມການເໜັງຕີງລາຄານ້ຳມັນເຊື້ອໄຟໃນຕະຫຼາດໂລກ ເວົ້າລວມ, ເວົ້າສະເພາະ ນ້ຳມັນເຊື້ອໄຟສຳເລັດຮູບຕະຫຼາດສິງກະໂປ ແມ່ນຍັງປັບຂຶ້ນຕໍ່ເນື່ອງ ໂດຍສົມທຽບລາຄາ CIF ຄັ້ງວັນທີ 22 ກຸມພາ 2022 (ສະເລ່ຍ ຄັ້ງວັນທີ 08 – 22 ກຸມພາ 2022) ກັບ ລາຄາ CIF ປະຕິບັດຄັ້ງວັນທີ 12 ກຸມພາ 2022 ເຊິ່ງເມື່ອນຳມາຄິດໄລ່ໃນໂຄງປະກອບລາຄານ້ຳມັນເຊື້ອໄຟ ທີ່ປະກອບດ້ວຍ (1) ພາສີ, (2) ອາກອນຊົມໃຊ້ (ອກຊ), (3) ອາກອນມູນຄ່າເພີ່ມ (ອມພ) ສະບັບປັບປຸງໃໝ່, (4) ກອງທຶນບູລະນະທາງຫຼວງ (ກທ ທາງ), (5) ຄັງແຮ ແລະ (6) ລາຍຮັບ-ລາຍຈ່າຍຂອງພາກທຸລະກິດ (ຄ່າບໍລິການ) ຈະເຮັດໃຫ້ລາຄາຂາຍຍ່ອຍນ້ຳມັນແອັດຊັງພິເສດ ປັບຂຶ້ນ 740 ກີບ/ລິດ, ລາຄານ້ຳມັນແອັດຊັງທຳມະດາ ປັບຂຶ້ນ 670 ກີບ/ລິດ ແລະ ລາຄານ້ຳມັນກາຊວນ ປັບຂຶ້ນ 420 ກີບລິດ.

ປັດໄຈທີ່ເຮັດໃຫ້ລາຄານ້ຳມັນເຊື້ອໄຟສຳເລັດຮູບ ເໜັງຕີງຂຶ້ນສູງ ແມ່ນເກີດຈາກບາງປັດໄຈ ເຊັ່ນ: ຄວາມບໍ່ເອກະພາບໃນການຜະລິດຂອງກຸ່ມປະເທດຜະລິດນ້ຳມັນ ໂດຍສະເພາະ ກຸ່ມ OPEC ແລະ ບັນດາປະເທດຜູ້ຜະລິດນ້ຳມັນ (ລາຍໃຫຍ່), ບັນຫາຄວາມຂັດແຍ່ງກັນຂອງຫຼາຍປະເທດ ເຊິ່ງມີຄວາມເປັນໄປໄດ້ທີ່ທ່າອ່ຽງລາຄານ້ຳມັນໃນຕະຫຼາດໂລກ ຍັງຈະສືບຕໍ່ປ່ຽນແປງຂຶ້ນໃນອັດຕາທີ່ສູງສຸດໃນຮອບ 08 ປີ.

ນັບຕັ້ງແຕ່ຕົ້ນປີ 2022 ເປັນຕົ້ນມາ, ລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແມ່ນມີການເໜັງຕີງຂຶ້ນສູງຖ້າທຽບໃສ່ປີຜ່ານມາ. ດັ່ງນັ້ນ, ພາກລັດ ຈຶ່ງພ້ອມກັນຄົ້ນຄວ້າວິທີການແກ້ໄຂ ໂດຍນັບແຕ່ຕົ້ນປີ 2022 ເປັນຕົ້ນມາ ໄດ້ຫຼຸດອາກອນມູນຄ່າເພີ່ມ (ອມພ) ລົງເຫຼືອ 7 % (ຈາກ 10 %) ແລະ ໄດ້ຫຼຸດຄັງແຮນ້ຳມັນເຊື້ອໄຟ ທຸກຊະນິດລົງເປັນແຕ່ລະໄລຍະ ເຊິ່ງມາຮອດປະຈຸບັນຄັງແຮນ້ຳມັນເຊື້ອໄຟທຸກຊະນິດ ແມ່ນເຫຼືອ 0 ກີບ/ລິດ ທັງນີ້ກໍເພື່ອບໍ່ໃຫ້ສົ່ງຜົນກະທົບຕໍ່ສະພາບເສດຖະກິດໂດຍລວມຂອງຊາດ ກໍຄືຕໍ່ການດຳລົງຊີວິດປະຈຳວັນຂອງສັງຄົມ, ການຂົນສົ່ງສິນຄ້າ, ອັດຕາເງິນເຟີ້, ຄ່າຄອງຊີບ ຫຼາຍເກີນໄປ; ແຕ່ເນື່ອງຈາກປະຈຸບັນ ຄັງແຮນ້ຳມັນເຊື້ອໄຟແມ່ນເຫຼືອ 0 ກີບ/ລິດ ໃນການປັບລາຄານ້ຳມັນເຊື້ອໄຟ ຄັ້ງວັນທີ 24 ກຸມພາ 2022 ນີ້ ຈຶ່ງມີຄວາມຈຳເປັນຕ້ອງລາຄານ້ຳມັນເຊື້ອໄຟທຸກຊະນິດຂຶ້ນຕາມການເໜັງຕີງຂອງຕະຫຼາດ ເຊິ່ງຖ້າທຽບໃສ່ບັນດາປະເທດໃກ້ຄຽງ ເຊັ່ນ: ສສ ຫວຽດນາມ ຫຼື ໄທ ເຫັນວ່າເຂົາເຈົ້າເອງ ກໍໄດ້ປັບລາຄານ້ຳມັນເຊື້ອໄຟຂຶ້ນຕາມການເໜັງຕີງຂອງຕະຫຼາດ ໂດຍສະເພາະ ສສ ຫວຽດນາມ ແມ່ນໄດ້ປັບລາຄານ້ຳມັນເຊື້ອໄຟ ທຸກ 15 ວັນ ແລະ ແຕ່ຕົ້ນປີ 2022 ແມ່ນປັບຂຶ້ນແລ້ວ 04 ຄັ້ງ (ເວົ້າສະເພາະນ້ຳມັນກາຊວນ ໄດ້ປັບຂຶ້ນຄື: ປັບຂຶ້ນ 660 ດົງ/ລິດ, 670 ດົງ/ລິດ, 960 ດົງ/ລິດ ແລະ 940 ດົງ/ລິດ ລວມ 04 ຄັ້ງ 3.230 ດົງ/ລິດ ຫຼື 1.680 ກີບ/ລິດ).

ຕໍ່ສະພາບດັ່ງກ່າວ, ຈຶ່ງຮຽກຮ້ອງມາຍັງທະຫານ, ຕຳຫຼວດ, ພະນັກງານ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ຈົ່ງມີສະຕິ, ປະຢັດມັດທະຍັດໃຊ້ຈ່າຍໃນສິ່ງທີ່ຈຳເປັນ ໂດຍສະເພາະ ແມ່ນການຊົມໃຊ້ຍານພາຫະນະ ຫຼື ຫັນໄປໃຊ້ຍານພາຫະນະທາງເລືອກ; ໃນຂະນະດຽວກັນ ກໍຮຽກຮ້ອງມາຍັງບັນດາຜູ້ປະກອບການທຸລະກິດຕ່າງໆ ຈົ່ງຢ່າໄດ້ສວຍ ໂອກາດຂຶ້ນລາຄາສິນຄ້າຕາມລຳພັງໃຈ ແລະ ກັກຕຸນສິນຄ້າ ກໍຄືນ້ຳມັນເຊື້ອໄຟ ໃນໄລຍະລາຄານ້ຳມັນເຊື້ອໄຟເໜັງຕີງຂຶ້ນ, ຫາກພົບເຫັນການສວຍໂອກາດຂຶ້ນລາຄາສິນຄ້າ ແມ່ນຈະໄດ້ໃຊ້ມາດຕະການຕາມກົດໝາຍ ແລະ ລະບຽບການ.

ຫາກພົບເຫັນ ການສວຍໂອກາດຂຶ້ນລາຄາສິນຄ້າ ທ່ານສາມາດ ໂທແຈ້ງສາຍດ່ວນ 1510 ແລະ ເວັບໄຊປົກປ້ອງຜູ້ຊົມໃຊ້ WWW.lcp.gov.la ໄດ້.

ນະຄອນຫຼວງວຽງຈັນ, ວັນທີ 24 ກຸມພາ 2022

ກົມການຄ້າພາຍໃນ